ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ກະຊວງພະລັງງານແລະບໍ່ແຮ່

ຫ້ອງການ

ເລກທີ 0727 /ພບ.ຫກ

ນະຄອນຫຼວງວຽງຈັນ,ວັນທີ 07 FEB 2024.

## ໜັງສືແຈ້ງການ

**ເຖິງ** : ບັນດາຫ້າງຮ້ານ, ບໍລິສັດ ແລະ ວິສາຫະກິດ.

**ເລື່ອງ** : ເຂົ້າຮ່ວມສະເໜີລາຄາ ປະມູນວຽກງານບໍລິຫານ ກະຊວງພະລັງງານ ແລະ ບໍ່ແຮ່ ປະຈຳປີ 2024.

– ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017.

– ອີງຕາມ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 624/ນຍ, ລົງວັນທີ 22 ຕຸລາ 2021 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງພະລັງງານ ແລະ ບໍ່ແຮ່.

ຫ້ອງການກະຊວງພະລັງງານ ແລະ ບໍ່ແຮ່ ຂໍແຈ້ງມາຍັງບັນດາຫ້າງຮ້ານ, ບໍລິສັດ ແລະ ວິສາຫະກິດ ທີ່ມີຄວາມສົນໃຈ ເຂົ້າຮ່ວມສະເໜີລາຄາປະມູນວຽກງານດັ່ງນີ້:

1. ບໍລິການສ້ອມແປງເຄື່ອງຈັກອຸປະກອນ ( ສ້ອມແປງແອ, ໄຟຟ້າ ແລະ ອຸປະກອນນ້ຳປະປາ );
2. ສະໜອງເຄື່ອງຮັບໃຊ້ຫ້ອງການ, ນ້ຳມຶກ ແລະ ອຸປະກອນໄອທີ;
3. ບໍລິການສ້ອມແປງພາຫະນະ;
4. ບໍລິການເຊົ່າເຄື່ອງຖ່າຍເອກະສານ.

ສາມາດຕິດຕໍ່ສະເໜີລາຄາຕາມວັນ ແລະ ເວລາລັດຖະການ (ວັນຈັນ-ວັນສຸກ ເວລາ **8:30** ຫາ **16:00** ນາທີ) ນັບແຕ່ມື້ແຈ້ງຈົນຮອດວັນທີ **15 ມີນາ 2024.**

**ໝາຍເຫດ:** ເວລາເຂົ້າມາພົວພັນສະເໜີລາຄາໃຫ້ແຕ່ງກາຍສຸພາບ (ເພດຍິງນຸ່ງສິ້ນລາວ, ເພດຊາຍນຸ່ງໂສ້ງຂາຍາວ ແລະ ເສື້ອ ສຸພາບ)

ດັ່ງນັ້ນ, ຈຶ່ງແຈ້ງບັນດາຫ້າງຮ້ານ, ບໍລິສັດ ແລະ ວິສາຫະກິດ ຊາບດ້ວຍ.

ຫົວໜ້າຫ້ອງການ

ຄຳໄສ ກຸໂພຄຳ

**ຕິດຕໍ່ພົວພັນ:** ນາງ ຈິນຕະນາວັນ ຊາພັກດີ 020 2221 4822

ທ້າວ ພູວຽງ ຖາວິວອນ 020 5456 5962